# ບົດທີ 11

# ຄຳເທດສະໜາຂອງພວກສາວົກ




*ຄຶດສະຕຽນໃນສະໄໝພວກອັກຄະສາວົກ ຮູ້ຈັກອຳນາດຂອງພະວິນຍານບໍລິສຸດແທ້. ໃຫ້ເຮົາຮຽນເລື່ອງເຂົາ ເພື່ອຈະໃຫ້ເຂົາເປັນແບບຢ່າງ.*

**1** ເຮົາຈະຮຽນເລື່ອງຄຳເທດສະໜາຂອງເປໂຕທີ່ລາຍງານໄວ້ໃນພະທຳກິດຈະການ. ຄຳເທດສະໜາທຳອິດຕົກໃນ ວັນເພັນເຕຄໍສະເຕ (ອ່ານ ກຈກ 2:14-40)

ກ. ໃນວັນນັ້ນ ລູກສິດຂອງພະອົງເຕັມໄປໂດຍຫຍັງ? ____________________________

ຂ. ໃນ ກຈກ 2:6 ຕ່າງຄົນກໍຕ່າງໄດ້ຍິນພວກສາວົກເວົ້າຫຍັງ? ____________________

**2** ກ. ຝູງຄົນຫຼວງຫຼາຍໄດ້ມາໂຮມກັນ ເພາະການສະເດັດມາຂອງອົງໃດ? ______________

ຂ. ຄຳເທດສະໜາທຳອິດຂອງເປໂຕໃນພະທຳກິດຈະການຢູ່ໃນບົດແລະຂໍ້ໃດ? _________

ໃຫ້ທ່ານເອົາສໍສີຟ້າຂີດໃສ່ຂອບເຈ້ຍຂ້າງບົດເທດສະໜາຂອງເປໂຕໃນພະຄຳພີ
(ກິດຈະການ ບົດທີ 2 ຈາກຂໍ້ 14 ເຖິງຂໍ້ 40)
ແລ້ວຂຽນຄຳວ່າ "ບົດເທດທຳອິດຂອງເປໂຕ" ໃສ່ຂ້າງ.

*ກ່ອນຈະຮຽນເລື່ອງບົດເທດທຳອິດນີ້ຢ່າງລະອຽດ ເຮົາຈະໝາຍບົດເທດອີກ 4 ບົດໄວ້.*

**3** ກ. ໃຫ້ທ່ານຮຽນເຫດການຈາກ ກຈກ 3:1-11. ແມ່ນຄົນຢ່າງໃດດີພະຍາດ? __________

ຂ. ໃນຂໍ້ 11 ປະຊາຊົນມາຫາເປໂຕກັບໂຢຮັນຢູ່ໃສ? __________________________

**4** ກ. ປະຊາຊົນມາຫາເປໂຕແລະໂຢຮັນ ເພາະການອັດສະຈັນໃດ? _________________

ຂ. ເລື່ອງບົດເທດນັ້ນເຫັນໃນພະທຳກິດຈະການບົດແລະຂໍ້ໃດ? ___________________

| ໃຫ້ທ່ານເອົາສໍສີຟ້າຂີດໃສ່ຂອບເຈ້ຍໃນພະຄຳພີຂ້າງບົດເທດສະໜາທີ 2 (ກຈກ 3:12-26) ແລ້ວຂຽນ "ບົດເທດທີສອງຂອງເປໂຕ" |
|---|

**5** ກ. ໃນໂອກາດທຳອິດຫຼາຍຄົນມາໂຮມກັນເພາະສາເຫດໃດ? ______________________

ຂ. ໃນໂອກາດທີສອງປະຊາຊົນມາຫາເປໂຕເພາະຫຍັງ? _______________________

**6** ບົດເທດສະໜາທີ 3 ຢູ່ໃນກິດຈະການ ບົດທີ 4 ຂໍ້ 8-12 ແລະ 19-20. ໃນໂອກາດນັ້ນ ເປໂຕ ແລະໂຢຮັນຢູ່ ຕໍ່ໜ້າ ສານສູງສຸດ. ຄວາມທີ່ເຂົາກ່າວນັ້ນແມ່ນຄຳຕອບຂອງເຂົາທີ່ເຮົາຖືວ່າເປັນຄຳເທດສະໜາກໍໄດ້.

ກ. ໃນຄຳເທດສະໜາເທື່ອທີ 3 ນີ້ ເປໂຕແລະໂຢຮັນ ຢູ່ຕໍ່ໜ້າໃຜ? _________________

ຂ. ລາຍງານໃນພະທຳກິດຈະການ ບົດແລະຂໍ້ໃດ? ____________________________

| ໃຫ້ເອົາສໍສີຟ້າຂີດໃສ່ຂອບເຈ້ຍໃນພະຄຳພີ ຈາກ ກຈກ 4:8-12 ແລະ 19-20 ແລ້ວຂຽນຄຳ "ບົດເທດທີສາມຂອງເປໂຕ" ໃສ່ຂ້າງ. |
|---|

**7** ບົດເທດສະໜາທີ 4 ບັນທຶກໄວ້ໃນກິດຈະການ 5:29-32.

ກ. ໃນ ກຈກ 5:29 ແມ່ນໃຜປາກ? ______________________________________

ຂ. ໃນ ກຈກ 5:27 ເຂົາຢູ່ຕໍ່ໜ້າໃຜ? ____________________________________

**8** ກ. ໃນໂອກາດນີ້ ເປໂຕຢູ່ຕໍ່ໜ້າສານສູງສຸດຈັກເທື່ອແລ້ວ? ______________________

ຂ. ຄຳເທດຫຍໍ້ນີ້ ເຫັນໃນພະທຳກິດຈະການ ບົດແລະຂໍ້ໃດ? ______________________

| ໃຫ້ໝາຍບົດເທດນີ້ໄວ້ ເຊັ່ນດຽວກັນຄື ກິດຈະການ 5:29-30 ແລ້ວຂຽນຄຳວ່າ "ບົດເທດທີສີ່ຂອງເປໂຕ" |
|---|

**9** ບັດນີ້ ເຮົາຈະຮຽນຄືນ (ໃຫ້ຕື່ມຄວາມທີ່ຂາດ)

ກ. ໃນໂອກາດທີ 1: ຫຼາຍຄົນມາຮ່ວມກັນເພາະການ _________ ຂອງພະວິນຍານບໍລິສຸດ.

ຂ. ໃນໂອກາດທີ 2: ປະຊາຊົນມາຫາເປໂຕແລະໂຢຮັນຫຼັງຈາກເຫັນຄົນ __ ຜູ້ໜຶ່ງດີພະຍາດ.

ຄ. ໃນໂອກາດທີ 3: ເປໂຕ (ແລະໂຢຮັນ) ຢູ່ຕໍ່ໜ້າ ________________ ເປັນເທື່ອທຳອິດ.

ງ. ໃນໂອກາດທີ 4: ເປໂຕ (ແລະສາວົກອື່ນ ໆ) ຢູ່ຕໍ່ໜ້າສານສູງສຸດເທື່ອທີ ___________ .



**10** ໃນໂອກາດສຸດທ້າຍທີ່ເປໂຕເທດສະໜານີ້ (ທີ 5)ມີ ນາຍຮ້ອຍທະຫານໂລມຄົນໜຶ່ງທີ່ເຊີນມາເຮືອນກ່າວ ພະທຳຂອງ ພະເຈົ້າ. ນາຍຮ້ອຍຄົນນັ້ນຊື່ຫຍັງ? (ກຈກ 10:1) ____________

**11** ພະທຳກິດຈະການລາຍງານເລື່ອງຄຳເທດສະໜາຂອງ ເປໂຕໃນເຮືອນຂອງນາຍຮ້ອຍໂກເນລີໂອ. ໃນບົດແລະຂໍ້ໃດ? ____________

| ໃຫ້ທ່ານໝາຍບົດເທດສະໜາທີ 5 ໂດຍໃສ່ສໍສີຟ້າຕາມເຄີຍ. |
|---|

**12** ໃຫ້ຈົດບົດແລະຂໍ້ໃນພະຄຳພີທີ່ບັນທຶກເລື່ອງຄຳເທດສະໜາຂອງເປໂຕທີ່ຮຽນມາແລ້ວ. (ເບິ່ງບ່ອນໝາຍໄວ້ໃນພະຄຳພີກໍໄດ້)

ບົດເທດທີ 1 ກຈກ ____________________________

ບົດເທດທີ 2 ____________________________

ບົດເທດທີ 3 ____________________________

ບົດເທດທີ 4 ____________________________

ບົດເທດທີ 5 ____________________________

**13** ກ. ເທື່ອທຳອິດ ຄົນມາໂຮມຟັງເພາະຫຍັງ? ____________________

ຂ. ເທື່ອທີ 2 ຄົນມາຫາເຂົາຫຼັງຈາກຫຍັງ? ____________________

ຄ. ເທື່ອທີ 3 ເປໂຕກ່າວພະທຳຕໍ່ໜ້າໃຜ? ____________________

ງ. ເທື່ອທີ 4 ກ່າວພະທຳຕໍ່ໜ້າໃຜຊ້ຳອີກ? ____________________

ຈ. ເທື່ອທີ 5 ໃຜເຊີນເຂົາມາກ່າວຢູ່ເຮືອນ? ____________________

**14** ກ. ມີແຕ່ເທື່ອດຽວທີ່ມີຄົນເຊີນເອົາມາກ່າວພະທຳຄືເທື່ອໃດ? ____________

ຂ. ໃນ 4 ເທື່ອກ່ອນ ເປໂຕສວຍໂອກາດເຮັດຫຍັງ? ____________

**15** ໃນບົດເທດທັງ 5 ເທື່ອ ເປໂຕກ່າວແຕ່ເນື້ອເລື່ອງດຽວຄືກ່າວເລື່ອງການສິ້ນພະຊົນ ແລະການຄືນພະຊົນຂອງໃຜ? ____________________________

**16** ເຫັນວ່າທຸກເທື່ອທີ່ເປໂຕມີໂອກາດເທດສະໜາໃນພະທຳກິດຈະການ ເພິ່ນເທດສະໜາກ່ຽວກັບໃຜເປັນຕົ້ນ? ____________________________

**17** ເປໂຕຢາກແຕ່ໃຫ້ຜູ້ຟັງແນ່ໃຈເລື່ອງພະເຢຊູ. ສ່ວນຫຼາຍຜູ້ຟັງເປັນແຕ່ຊາດຢິວ ແລະເປໂຕຢາກໃຫ້ເຂົາຮັບຮູ້ວ່າ ຜູ້ ປະກາດພະທຳໃນພະຄຳພີເດີມ ປະກາດແຕ່ເລື່ອງພະເຢຊູອົງດຽວນີ້.

ກ. ໃນ ກຈກ 2:25-31 ເພິ່ນກ່າວອ້າງຄຳທຳນວາຍຈາກພະຄຳພີເດີມເລື່ອງການຄືນພະຊົນ.
ເພິ່ນຍົກຄວາມຂອງໃຜມາ? ____________________________

ຂ. ໃນ ກຈກ 2:34-36 ເປໂຕກ່າວອ້າງຄວາມຂອງໃຜເລື່ອງທີ່ພະເຢຊູຈະນັ່ງເບື້ອງຂວາມືຂອງພະບິດາ? ______________________________

ຄ. ເປໂຕຍົກກ່າວອ້າງຄຳທຳນວາຍເຫຼົ່ານັ້ນຈາກພະຄຳພີເດີມຫຼືພະຄຳພີໃໝ່? __________

**18** ກ. ໃນກິດຈະການ 3:13 ບອກວ່າພະເຢຊູເປັນຜູ້ຮັບໃຊ້ພະເຈົ້າຂອງ ________________ ______________________ ແລະ ______________________ . (ຕື່ມຄວາມຂາດ)

ຂ. ໃນກິດຈະການ 3:22 ເປໂຕບອກວ່າໃຜທຳນວາຍກ່ຽວກັບພະເຢຊູ? _____________

ຄ. ໃນກິດຈະການ 3:24 ເປໂຕຢືນຢັນວ່າບັນດາຜູ້ປະກາດພະທຳໄດ້ປະກາດເຖິງຄາວໃດ?

______________________________________________

ງ. ໃນກິດຈະການ 4:11 ເປໂຕຍົກຄຳທຳນວາຍຈາກພະຄຳພີເດີມ ເພື່ອກ່າວຄວາມວ່າເຂົາເປັນຜູ້ຖິ້ມພະອົງ. ເປໂຕຍົກ ມາຈາກບົດແລະຂໍ້ໃດໃນພະຄຳພີເດີມ? _____________

**19** ເປໂຕຍົກກ່າວອ້າງຄຳທຳນວາຍຈາກໃສໝົດ? (ເລືອກ)

ກ. _______ ພະທຳມັດທາຍ

ຂ. _______ ພະຄຳພີໃໝ່

ຄ. _______ ພະຄຳພີເດີມ



**20** ມີຫຼາຍເທື່ອທີ່ເປໂຕຍົກຄຳທຳນວາຍຈາກພະຄຳພີເດີມເລື່ອງ ຜູ້ນຳທີ່ພະເຈົ້າຊົງເລືອກໄວ້ (ຄືເມຊີອາ) ແລ້ວຊີ້ຕົວວ່າ ເປັນໃຜ? ________________________

**21** ເປໂຕປະກາດວ່າຄຳທຳນວາຍໃນພະຄຳພີເດີມນັ້ນສຳເລັດໃນພະເຢຊູ.

ກ. ຊາດຢິວສ່ວນຫຼາຍລໍຖ້າວ່າຜູ້ທີ່ພະເຈົ້າຊົງເລືອກໄວ້ໃຫ້ມາຈະມາຢ່າງໃດ? (ເລືອກ)

______ ຖ່ອມຕົວ ______ ຈະຖືກຂ້າ ______ ຜູ້ມີໄຊ

ຂ. ແຕ່ພະເຢຊູບໍ່ໄດ້ມາເປັນເຈົ້ານາຍ ພະເຢຊູເກີດບ່ອນໃດ? ____________________

ຄ. ຕາຍບ່ອນໃດ? ______________________________________

ງ. ພະເຢຊູທຳລາຍຈັກກະພັດໂລມບໍ່? ______________________________

ຈ. ດັ່ງນັ້ນ ເປໂຕຈຳເປັນຕ້ອງສະແດງໃຫ້ເຂົາເຫັນຈາກພະຄຳພີເດີມວ່າ ຜູ້ທີ່ພະເຈົ້າຊົງເລືອກໄວ້ຄືໃຜແທ້?______________________________________

ສ. ເປໂຕພິສູດວ່າຄຳທຳນວາຍໃນພະຄຳພີ ___________ ສຳເລັດໃນພະເຢຊູ. (ຕື່ມຄວາມ)

**22** ເປໂຕກ່າວເລື່ອງການສິ້ນພະຊົນ ແລະການຄືນພະຊົນ ແລ້ວໃນກິດຈະການ 2:36 ບອກວ່າພະເຈົ້າຊົງແຕ່ງຕັ້ງ ພະ ເຢຊູເປັນທັງອົງ ____________ ແລະເປັນ ________ . (ຕື່ມຄວາມ)

**23** ໃນກຈກ 3:23 ເຫັນວ່າພະເຢຊູມີອຳນາດສູງຈົນກວ່າຜູ້ບໍ່ເຊື່ອຟັງພະອົງຈະຖືກຕັດຂາດໃຫ້ຫຍັງ? ______________________________________________

**24** ກ. ໃນ ກຈກ 4:11 ເຫັນວ່າພະເຢຊູເປັນຫີນທີ່ເຂົາປະຖິ້ມ ກາຍເປັນຫີນຢ່າງໃດ? _______

ຂ. ໃນ ກຈກ 5:31 ພະເຈົ້າຍົກຕັ້ງພະເຢຊູໄວ້ໃຫ້ເປັນພະຜູ້ນຳແລະຫຍັງອີກ? __________

ຄ. ໃນ ກຈກ 10:36 ເປໂຕບອກວ່າ ພະເຢຊູເປັນໃຜ? (ຕື່ມຄວາມຂາດ)

_____________________________ ຂອງ __________________________

**25** (ຕື່ມຄວາມທີ່ຂາດຕໍ່ໄປ) ເປໂຕປະກາດວ່າ ພະເຢຊູຄື _________________ ຂອງທຸກຄົນ ໃນໂລກທັງເປັນຜູ້ທີ່ ພະ ເຈົ້າຊົງ ________ ໄວ້ຕາມຄຳທຳນວາຍໃນພະຄຳພີ _______ .

**26** ກ. ເປໂຕປະກາດວ່າພະເຢຊູເປັນພະໃດ? ________________________________

ຂ. ແມ່ນໃຜເລືອກຕັ້ງພະເຢຊູໄວ້? ______________________________________

ຄ. ທຳນວາຍໄວ້ໃນສະໄໝພະຄຳພີໃດ? ___________________________________

**27** ໃຫ້ເຮົາຮຽນຄືນເລື່ອງ 5 ເທື່ອທີ່ເປໂຕເທດສະໜາໃນພະທຳກິດຈະການ. ໃຫ້ທ່ານກ່າວພຶດຕິ ການໃນແຕ່ລະເທື່ອ.

ເທື່ອທີ 1 ________________________________________________________

ເທື່ອທີ 2_________________________________________________________ _

ເທື່ອທີ 3 ________________________________________________________

ເທື່ອທີ 4 ________________________________________________________

ເທື່ອທີ 5 ________________________________________________________

**28** ເປໂຕກ່າວເລື່ອງເຫດການສຳຄັນຂອງພະເຢຊູ 3 ປະການຄື: ການສິ້ນພະຊົນ ການຄືນພະຊົນ ແລະການຕັ້ງຢູ່ຂວາ ມື ຂອງພະເຈົ້າ. ໃຫ້ທ່ານອ່ານຂໍ້ພະຄຳພີທີ່ຍົກມາຈາກຄຳເທດສະໜາ ຂອງເປໂຕ ແລ້ວຂຽນຄຳວ່າ "ສິ້ນ" "ຄືນ" ແລະ "ຕັ້ງຂວາມື" ຢູ່ຂ້າງຂໍ້ພະຄຳພີນັ້ນ.

| | |
|---|---|
| ກ. _______________ ກຈກ 2:23 | ສ. ________________ ກຈກ 4:10 |
| ຂ. _______________ ກຈກ 2:24 | ຊ. ________________ ກຈກ 5:30 |
| ຄ. _______________ ກຈກ 2:32 | ຍ. ________________ ກຈກ 5:31 |
| ງ. _______________ ກຈກ 2:34-36 | ດ. ________________ ກຈກ 10:39 |
| ຈ. _______________ ກຈກ 3:15 | ຕ. ________________ ກຈກ 10:40 |

**29** ຮູບ ______________________ ໜ້າປົກບົດຮຽນນີ້ ສະແດງເຖິງເຫດການ 3 ປະການນັ້ນ.

ຮູບ "ກ" ສະແດງເຖິງເຫດການໃດ? ______________________________________

ຮູບ "ຂ" ເຫດການໃດ? _____________________________________________

ຮູບ "ຄ" ເດ? __________________________________________________

**30** ກ. ຄຳເທດສະໜາຂອງເປໂຕໃນພະທຳກິດຈະການ ກ່າວເລື່ອງໃຜເປັນຕົ້ນ? __________

ຂ. ເນັ້ນເລື່ອງເຫດການ 3 ປະການໃດ? ______________________________

____________________________ ______________________________

**31** ກ. ເປໂຕເທດສະໜາວ່າພະເຢຊູເປັນພະໃດ? ______________________________

ຂ. ແມ່ນໃຜທີ່ພະເຈົ້າເລືອກໄວ້ໃນພະຄຳພີເດີມ? ___________________________

**32** ເປໂຕເທດສະໜາເລື່ອງເຫດການຂອງພະເຢຊູ 3 ປະການໃດ?

ກ. ______________________________________________________________

ຂ. ______________________________________________________________

ຄ. ______________________________________________________________

**33** ເປໂຕປ່າວປະກາດເລື່ອງຂອງພະເຢຊູ ແຕ່ຍິ່ງກວ່ານັ້ນອີກເອົາເລື່ອງຂອງພະເຢຊູມາໃສ່ໃຫ້ຜູ້ຟັງ. ໃນ ກຈກ 2:38 ກ່າວວ່າ: "ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສະມາໃນພະນາມຂອງພະເຢຊູຄຣິດທຸກຄົນ ເພື່ອການຊົງ _______________ ຂອງພວກທ່ານ ແລ້ວພວກທ່ານຈະໄດ້ຮັບ______________________ ຄື ____________________". (ຕື່ມຄວາມ)

**34** ໃນ 3 ຂໍ້ຕໍ່ໄປນີ້ ມີຂໍ້ໃດທີ່ກ່າວເຖິງການຍົກຜິດບາບ?

______ ກຈກ 3:19 ______ ກຈກ 5:31 ______ ກຈກ 10:43

**35** ເປໂຕສະເໜີຂອງພະລາຊະທານສອງປະການໃດ?

ກ. ______________________________________________________________

ຂ. ______________________________________________________________

**36** ຖ້າເຂົາຈະຮັບຂອງພະລາຊະທານເຫຼົ່ານັ້ນຕ້ອງມີເງື່ອນໄຂກ່ອນ.

ກ. ໃນ ກຈກ 2:38 ແລະ ກຈກ 3:19 ເປໂຕບອກໃຫ້ເຂົາຈົ່ງເຮັດຫຍັງກ່ອນ?

______________________________________________________________

ຂ. ໃນ ກຈກ 5:31 ແມ່ນໃຜຍົກຜິດບາບ? ________________________________

**37** ໃນ ກຈກ 2:38 ທີ່ອ່ານມາກ່ອນນັ້ນ ນອກຈາກທີ່ຈະຖິ້ມໃຈເກົ່າເອົາໃຈໃໝ່ ເຂົາຈົ່ງຮັບຫຍັງ?

________________________________________________________________

**38** ອີກເທື່ອໜຶ່ງ ໃຫ້ທ່ານຈົດພຶດຕິການໃນ 5 ເທື່ອທີ່ເປໂຕເທດສະໜາໃນພະທຳກິດຈະການ.

ທີ 1 ____________________________________________________________

ທີ 2 ____________________________________________________________

ທີ 3 ____________________________________________________________

ທີ 4 ____________________________________________________________

ທີ 5 ____________________________________________________________

**39** (ໃຫ້ຕື່ມຄວາມທີ່ຂາດ)

ກ. ເປໂຕປະກາດວ່າພະເຢຊູຄືພະ _______________________ ຂອງ __________ .

ຂ. ເປັນຜູ້ທີ່ພະເຈົ້າ _______________ ໄວ້ໃນສະໄໝພະຄຳພີ ________________ .

ຄ. ເປໂຕຍົກເລື່ອງເຫດການສຳຄັນເລື່ອງພະເຢຊູ 3 ປະການຄື:

____________________ ____________________ ____________________

ງ. ຄົນທັງປວງທີ່ຈະຖິ້ມ __________________ ນັ້ນ ພະເຢຊູຈະຍົກ ____________ ໃຫ້.

## ການປະຕິບັດ

**40** ເຫັນວ່າເປໂຕເທດສະໜາແຕ່ເລື່ອງພະເຢຊູເປັນຕົ້ນ. ພວກເຮົາໃນທຸກວັນນີ້ຄວນເທດສະໜາເລື່ອງຫຍັງເປັນ ຕົ້ນ? (ເລືອກ)

ກ. _______ ເລື່ອງພະເຢຊູ

ຂ. _______ ຄຳພະຍານເລື່ອງປະສົບປະການຂອງເຮົາ

ຄ. _______ ເລື່ອງໃນພະຄຳພີເດີມ

**41** ທີ່ເປໂຕເທດສະໜາແຕ່ເລື່ອງພະເຢຊູ ຄືພະເຢຊູຕາຍ ແລະຄືນມາຈາກຕາຍເປັນຕົ້ນ. ຂໍ້ໃດໃນພະຄຳພີບອກວ່າອາ ຈານໂປໂລເທດສະໜາເລື່ອງດຽວກັນກັບເປໂຕ? (ເລືອກ)

ກ. ______ 1 ກລທ 14:36 ຂ. ______ 1 ກລທ 15:3-4 ຄ. ______ 1 ກລທ 16:21

**42** ໃນທຸກວັນນີ້ ພວກເຮົາສົມຄວນເທດສະໜາເນັ້ນເລື່ອງເຫດການເຫຼົ່ານັ້ນບໍ່? ____________

ໃນເມື່ອທ່ານເທດສະໜາ ທ່ານມັກເນັ້ນເລື່ອງໃດ? ______________________________

ທ່ານເທດສະໜາເລື່ອງດຽວກັນກັບ ເປໂຕແລະໂປໂລບໍ່? ________________________

ສົມຄວນເທດສະໜາເລື່ອງໃດເປັນຕົ້ນ? ____________________________________

**43** ເປໂຕສວຍໂອກາດເທດສະໜາທຸກເທື່ອ. ຂໍ້ໃດຕໍ່ໄປນີ້ສະແດງໃຫ້ເຫັນວ່າ ພວກເຮົາຄວນເຮັດຢ່າງດຽວກັນ? (ເລືອກ)

_______ ອຟຊ 5:16 _______ 2 ຕມທ 4:2 _______ 2 ຕມທ 4:4

**44** ໃຫ້ທ່ານຈົດໂອກາດທີ່ທ່ານອາດຈະສວຍໂອກາດກ່າວເລື່ອງພະເຢຊູໄດ້.

_________________________________________________________________

_________________________________________________________________

**45** ເມື່ອເປໂຕເທດສະໜາໃນພະທຳກິດຈະການນີ້ ເພິ່ນເທດສະໜາຢ່າງໃດ? (ເລືອກ)

ກ. ______ ເພິ່ນຍົກເລື່ອງນຳມາໃຊ້ຕໍ່ຜູ້ຟັງ

ຂ. ______ ເພິ່ນຍົກເລື່ອງມາເພື່ອຈະຖຽງກັບເຂົາ

ຄ. ______ ເພິ່ນຍົກແຕ່ທິດສະດີມາກ່າວ

**46** ເປໂຕເທດສະໜາໃຫ້ຜູ້ຟັງຈິ່ງຖິ້ມຫຍັງ? ______________________________

✸ ຖ້າທ່ານເທດສະໜາ ແຕ່ບໍ່ເຫັນໃຜຖິ້ມໃຈເກົ່າເອົາໃຈໃໝ່ ບໍ່ເຫັນໃຜປ່ຽນໃຈ ບໍ່ມີໃຜປ່ຽນທ່າທີ ປາກົດວ່າຄຳ ເທດສະໜາຂອງທ່ານເປັນປະໂຫຍດບໍ່? _________________

*ຢ່າລືມບົດເສັງ!*

## ຄຳຕອບ:

**1** *ກ. ພະວິນຍານບໍລິສຸດ ຂ. ເວົາພາສາໃໝ່ລາວ (ພາສາຕ່າງ ໆ ກໍໄດ້)*

**2** *ກ. ພະວິນຍານບໍລິສຸດ ຂ. ກິດຈະການ 2:14-40*

**3** *ກ. ຄົນງ່ອຍ ຂ. ລະບຽງຊະໂລໂມນ*

**4** *ກ. ຄົນງ່ອຍດີພະຍາດ ຂ. ກຈກ 3:12-26*

**5** *ກ. ພະວິນຍານສະເດັດມາ ຂ. ຄົນງ່ອຍດີພະຍາດ*

**6** *ກ. ສານສູງສຸດ ຂ. ກຈກ 4:8-12 ແລະ 19-20*

**7** *ກ. ເປໂຕກັບອັກຄະສາວົກອື່ນ ໆ ຂ. ທີ່ປະຊຸມ (ທີ່ປະຊຸມນັ້ນກໍຄືສານສູງສຸດອີກ)*

**8** *ກ. ສອງເທື່ອ ຂ. ກຈກ 5:29-32*

**9** *ກ. ສະເດັດມາ ຂ. ງ່ອຍ ຄ. ສານສູງສຸດ ງ. ສອງ*

**10** *ໂກເນລີໂອ*

**11** *ກຈກ 10:34-43*

**12** *ກຈກ 2:14-40 ກຈກ 3:12-26 ກຈກ 4:8-12 ແລະ 19-20 ກຈກ 5:29-32 ກຈກ 10:34-43*

**13** *ກ. ພະວິນຍານສະເດັດມາ ຂ. ຄົນງ່ອຍດີພະຍາດ ຄ. ສານສູງສຸດ ງ. ສານສູງສຸດ ຈ. ໂກເນລີໂອ*

**14** *ກ. ທີ 5 ຂ. ເທດສະໜາ*

**15** *ພະເຢຊູ*

**16** *ພະເຢຊູ*

**17** *ກ. ດາວິດ ຂ. ດາວິດ ຄ. ພະຄຳພີເດີມ*

**18** *ກ. ອັບລາຮາມ ອີຊາກ ແລະຢາໂຄບ ຂ. ໂມເຊ ຄ. ຄາວນີ້ (ທີ່ພະເຢຊູມາ) ງ. ພສສ 118:22*

**19** *ຄ ຖືກ*

**20** *ພະເຢຊູ*

**21** *ກ. ຜູ້ມີໄຊ ຂ. ຮາງຫຍ້າ ຄ. ໄມ້ກາງແຂນ ງ. ບໍ່ ຈ. ພະເຢຊູ ສ. ເດີມ*

**22** *ພະຜູ້ເປັນເຈົ້າ... ພະຄຼິດ*

**23** *ຈົບຫາຍໄປຈາກພົນລະເມືອງ*

**24** *ກ. ເສົາເອກ ຂ. ພະຜູ້ໂຜດໃຫ້ພົ້ນ ຄ. ພະຜູ້ເປັນເຈົ້າ... ມະນຸດສະໂລກ*

**25** *ພະຜູ້ເປັນເຈົ້າ... ເລືອກ... ເດີມ*

**26** *ກ. ພະຜູ້ເປັນເຈົ້າ ຂ. ພະເຈົ້າ ຄ. ພະຄຳພີເດີມ*

**ຄຳຕອບ (ຕໍ່):**

**27** *ເທື່ອທີ 1 ຄົນມາໂຮມຫຼັງຈາກພະວິນຍານສະເດັດມາ*
*ເທື່ອທີ 2 ຄົນມາຫາເຂົາຫຼັງຈາກຄົນງ່ອຍດີພະຍາດ*
*ເທື່ອທີ 3 ເຂົາຢູ່ຕໍ່ໜ້າສານສູງສຸດ*
*ເທື່ອທີ 4 ຢູ່ຕໍ່ໜ້າສານສູງສຸດອີກ*
*ເທື່ອທີ 5 ໂກເນລີໂອເຊີນເຂົາມາກ່າວໃນເຮືອນ*

**28** *ກ. ສິ້ນ ສ. ສິ້ນ ຄືນ ຂ. ຄືນ ຊ. ສິ້ນ ຄືນ ຄ. ຄືນ*
*ຍ. ຕັ້ງຂວາມື ງ. ຕັ້ງຂວາມື ສິ້ນ ດ. ສິ້ນ ຈ. ສິ້ນ ຄືນ ຕ. ຄືນ*

**29** *ສິ້ນພະຊົນ ຄືນພະຊົນ ຕັ້ງໄວ້ຂວາມືຂອງພະເຈົ້າ*

**30** *ກ. ພະເຢຊູ*
*ຂ. ການສິ້ນພະຊົນ ການຄືນພະຊົນ ແລະ ການຕັ້ງໄວ້ຂວາມືຂອງພະເຈົ້າ*

**31** *ກ. ພະຜູ້ເປັນເຈົ້າ ຂ. ພະເຢຊູ*

**32** *ກ. ສິ້ນພະຊົນ ຂ. ຄືນພະຊົນ ຄ. ຕັ້ງໄວ້ຂວາມືຂອງພະເຈົ້າ*

**33** *ຍົກໂທດບາບ... ຂອງພະລາຊະທານ... ພະວິນຍານບໍລິສຸດ*

**34** *ຖືກ ໝົດ*

**35** *ກ. ການຍົກຜິດບາບ ຂ. ພະວິນຍານບໍລິສຸດ*

**36** *ກ. ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ຂ. ພະເຢຊູ*

**37** *ຮັບບັບຕິສະມາ*

**38** *ທີ 1 ຄົນມາໂຮມຫຼັງຈາກພະວິນຍານສະເດັດມາ*
*ທີ 2 ຄົນມາຫາເຂົາຫຼັງຈາກຄົນງ່ອຍດີພະຍາດ*
*ທີ 3 ເຂົາຢູ່ຕໍ່ໜ້າສານສູງສຸດ*
*ທີ 4 ຢູ່ຕໍ່ໜ້າສານສູງສຸດອີກ*
*ທີ 5 ໂກເນລີໂອເຊີນເຂົາມາກ່າວໃນເຮືອນ*

**39** *ກ. ຜູ້ເປັນເຈົ້າ... ມະນຸດສະໂລກ ຂ. ເລືອກ... ເດີມ*
*ຄ. ສິ້ນພະຊົນ ຄືນພະຊົນ ຕັ້ງ ໄວ້ຂວາມືຂອງພະເຈົ້າ*
*ງ. ໃຈເກົ່າເອົາໃຈໃໝ່... ຜິດບາບ*

**40** *ກ ຖືກ*

**41** *ຂ ຖືກ*

**42** *(ບໍ່ມີຄຳຕອບຕາຍຕົວ ໃຫ້ປຶກສາຫາລືກັນໃນປະຊຸມ)*

**43** *2 ຕມທ 4:2*

**44** *(ບໍ່ມີຄຳຕອບຕາຍຕົວ ໃຫ້ສະເໜີຄວາມຄິດເຫັນກັນແລະກັນໃນປະຊຸມ)*

**45** *ກ ຖືກ*

**46** *ຖິ້ມໃຈເກົ່າເອົາໃຈໃໝ່ (ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມ)*